## ວິທີການສ້າງຄວາມຍືນຍົງ

ການສ້າງຄວາມຍືນຍົງແມ່ນການທີ່ຈະເຮັດແນວໃດບໍ່ໃຫ້ປ່າແປກໝົດໄປ.

1. ແຕ່ລະປີປະຊາຊົນພາຍໃນບ້ານຈະຕ້ອງພາກັນໄປປູກຕົ້ນແປກເພື່ອທົດແທນຕົ້ນທີ່ປູກບໍ່ໄດ້ຜົນ(ຕົ້ນທີ່ຕາຍ
2. ແຕ່ລະປີຈະມີການຂະຫຍາຍພື້ນທີ່ປູກປ່າແປກໄປພູໜ່ວຍໃໝ່ທຸກໆປີ ແຕ່ລະຄອບຄົວຕ້ອງໄດ້ປູກຢ່າງ ໜ້ອຍ 200 ຕົ້ນຂຶ້ນໄປຕໍ່ພູ ໜຶ່ງໜ່ວຍ.

# ຄູ່ມື ວິທີການ ປູກຕົ້ນແປກ

(ສະບັບທົດລອງ)

ສູນອົບຮົມຮ່ວມພັດທະນາ (PADETC)

2008

## ວິທີນຳໃຊ້ຕົ້ນແປກ

1. ຕົ້ນແປກຊະນິດ 1 ຍອຍແມ່ນຊະນິດ ທີ່ມີຄວາມມັນຫລາຍສະນັ້ນຈິ່ງເອົາມາດັງໄຟ ເວລາເອົາຟືນຈາກປ່າມານຳໃຊ້ປະໂຫຍດກໍຕ້ອງເອົາໃຫ້ຖືກວິທີຄືຈະຕ້ອງຫັກເອົາງ່າໄມ້ແປກ ຫ້າມຕັດຕົ້ນມັນເດັດຂາດເພາະຈະເຮັດໃຫ້ນ້ຳຢາງມັນໄຫຼອອກ ແລ້ວຕົ້ນແປກຈະຕາຍ.
2. ຕົ້ນແປກຊະນິດ 2 ແລະ 3 ຍອຍແມ່ນເອົາໄປເຮັດເຟີນີເຈີ, ເຮືອນ ເພາະຕົ້ນແປກຊະນິດນີ້ບໍ່ມັນຫລາຍ.

## ຜົນໄດ້ຮັບຈາກການປູກຕົ້ນແປກ

1. ມີນ້ຳໃຊ້ຕະຫລອດປີ
2. ຝົນຟ້າອາກາດຕົກຕາມລະດູ
3. ລະບົບນິເວດປ່າສົມບູນຂຶ້ນສະແດງໃຫ້ເຫັນບ່ອນວ່າ: ມີແນງໄມ້ຫລາຍຊະນິດ, ມີເຫັດຫລາຍຊະນິເກີດຂຶ້ນ ເຊິ່ງແຕ່ກ່ອນບໍ່ມີ.
4. ມີໄມ້ໄວ້ເຮັດຟືນ ເຊິ່ງແຕ່ກ່ອນແມ່ນໄດ້ໄປເອົາຟືນຢູ່ໃກແຕ່ຕອນນີ້ແມ່ນສະດວກຂຶ້ນເພາະສາມາດເອົາຢູ່ໃກ້ໆ
5. ມີປ່າໄມ້ໄວ້ໃຫ້ລູກຫລານຊົມໃຊ້

## ສິ່ງທີ່ຄວນເອົາໃຈໃສ່

ປະຊາຊົນພາຍໃນບ້ານຕ້ອງໄດ້ເບິ່ງຊ່ວຍກັນເລື່ອງໄຟໄໝ້ປ່າຖ້າມັນລາມມາຮອດປ່າແປກຈະເຮັດໃຫ້ມັນໄໝ້ຈົນໝົດ.

## ວິທີປ້ອງກັນໄຟປ່າ

1. ຈູດຫຍ້າເປັນລຽວອ້ອມໜ້ອຍພູປະມານ 2 ແມັດເພື່ອປ້ອງກັນໄຟປ່າ.

2. ເພື່ອປ້ອງກັນບໍ່ໃຫ້ ໄຟໃໝ້ປ່າເຮົາສາມາດນຳເອົາເກືອມາໂຮຍໃສ່ຫຍ້າອອ້ມຕົນພູ ເມື່ອເວລາ ງົວ ຄວາຍ ມາກິນຫຍ້າ ພວກມັນຈະກິນໃນບໍລິເວນທີ່ມີເກືອເພາະພວກມັນມັກກິນເຄັມ ແລະ ຈະເຮັດໃຫ້ຫຍ້າທີ່ເຮົາໂຮຍເກືອນັ້ນຕາຍ.

# ຄູ່ມື

# ການປູກຕົ້ນແປກ

**(ສະບັບທົດລອງ)**

ຂຽນໂດຍ: ກຸ່ມໄວໜຸ່ມ
ບັນນາທິການໂດຍ:
ພິມ ແລະ ຈັດໜ້າໂດຍ: ກຸ່ມໄວໜຸ່ມ

ສູນອົບຮົມຮ່ວມພັດທະນາ (PADETC)
2008

# ຄຳນຳ

ປື້ມຄູ່ມື "ວິທີການປູກຕົ້ນແປກ" ເຫລັ້ມນີ້ແມ່ນສ້າງຂື້ນເພື່ອໃຫ້ເປັນຕົວຢ່າງໃນການປູກຕົ້ນແປກໃສ່ພູຫົວລົ້ນໃຫ້ກາຍເປັນປ່າ ຂອງບ້ານ ນາໂອ ເມືອງແປກ ແຂວງຊຽງຂວາງ

3. ພຽງເທົ່ານີ້ກໍ່ສຳເລັດແລ້ວ



## ການບົວລະບັດຮັກສາຕົ້ນແປກ

ການບົວລະບັດຮັກສາຕົ້ນແປກກໍບໍ່ມີຫຍັງຍາກເລີຍເພາະວ່າຕົ້ນແປກແມ່ນຕົ້ນໄມ້ທີ່ເຕີບໃຫ່ຍຕາມທຳມະຊາດ ງົວຄວາຍບໍ່ກິນ ແລະ ໃຫ່ຍໄວກ່ວາຕົ້ນຫຍ້າຊະນິດອື່ນ.

## ວິທີການປູກຕົ້ນແປກ

1. ຂຸດຂຸມເລິກປະມານ 8 ຊັງຕີແມັດ, ກ້ວາງປະມານ 6-7 ຊັງຕີແມັດດັ່ງຮູບແຕ້ມລຸ່ມນີ້:



2. ເອົາເບ້ຍລົງໃສ່ແລ້ວເອົາດິນຖົມໃຫ້ເຕັມຂຸມ ພຽງໜ້າດິນ (ຖ້າຖົມດິນບໍ່ເຕັມຂຸມເວລາຝົນຕົກນ້ຳຈະອັ່ງເຮັດໃຫ້ເບ້ຍແປກຕາຍ).



## ສາລະບານ

**ຫົວຂໍ້** **ໜ້າ**


1. ຊະນິດຂອງຕົ້ນແປກ.................................1
2. ວິທີເອົາເບ້ຍແປກ....................................2
3. ວິທີປູກຕົ້ນແປກ......................................3
4. ບົວລະບັດຮັກສາຕົ້ນແປກ.............................4
5. ສິ່ງທີ່ຄວນເອົາໃຈໃສ່.................................5
6. ວິທີນຳໃຊ້ຕົ້ນແປກ....................................6
7. ວິທີການສ້າງຄວາມຍືນຍົງ...........................7

## ຊະນິດຂອງຕົ້ນແປກ

ຕົ້ນແປກເປັນຕົ້ນໄມ້ທີ່ເກີດຢູ່ເຂດໜາວຕົ້ນແປກມີສາມຊະນິດຄື:

1. ຕົ້ນແປກຊະນິດ 1 ຍອຍ
2. ຕົ້ນແປກຊະນິດ 2 ຍອຍ
3. ຕົ້ນແປກຊະນິດ 3 ຍອຍ

## ວິທີປູກຕົ້ນແປກ

ການປູກຕົ້ນແປກປູກໄດ້ສອງວິທີຄື:

1. ເອົາແກ່ນມາກ້າ
2. ເອົາເບ້ຍແປກມາຈາກທຳມະຊາດ

ການປູກຕົ້ນແປກສ່ວນຫລາຍແມ່ນນິຍົມເອົາເບ້ຍແປກຈາກທຳມະຊາດມາປູກເພາະໄດ້ຜົນດີກວ່າໃຫ່ຍໄວ ແລະ ບໍ່ຕາຍ, ສ່ວນການກ້າເບ້ຍແມ່ນໃຊ້ເວລາດົນ, ເບ້ຍແປກນານໃຫ່ຍ.

## ວິທີເອົາເບ້ຍແປກ

ການເອົາເບ້ຍແປກແມ່ນໄດ້ຂຶ້ນໄປເອົາຢູ່ເທິງພູປ່າແປກວິທີເອົາມີດັ່ງນີ້:

1. ເອົາສຽມຈິ້ມອ້ອມເບ້ຍແປກເປັນຮູບສີ່ແຈແລ້ວຂຸດຂຶ້ນມາໝົດເບົ້າ ໂດຍບໍ່ໃຫ້ຂີ້ດິນແຕກອອກຈາກຮາກຂອງເບ້ຍແປກ (ຖ້າບໍ່ມີຂີ້ດິນຕິດຈະເຮັດໃຫ້ຕົ້ນແປກຕາຍ).



2. ເມື່ອໄດ້ຕົ້ນແປກມາແລ້ວໃຫ້ນຳໄປໄວ້ບ່ອນຮົ່ມເຊັ່ນ: ກ້ອງຕ່າລ່າງເຮືອນ, ຮົ່ມເຫລົ້າເຂົ້າ, ຄອກໄກ່, ຮົ່ມໄມ້...